## ຂ່າວປະຈຳອາທິດທີ 5 ປະຈຳເດືອນພະຈິກ 2017 ກ່ຽວກັບ ປະເດັນ ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃນ ສປປ ລາວ

## ສະຫຼຸບໂດຍ: ພະນັກງານສື່ສານ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG)

## ຂ່າວພາສາລາວ

**42 ປີ ສປປ ລາວ ມີເຂື່ອນໄຟຟ້າເພີ່ມຂຶ້ນ 50 ປີ: ສຳນັກຂ່າວສານປະເທດລາວ**

ປັດຈຸບັນ ສປປ ລາວ ມີ ເຂື່ອນໄຟຟ້າ ທັງໝົດ 50 ແຫ່ງ, ມີກຳລັງຕິດຕັ້ງ ທັງໝົດ 6.000 ກວ່າເມກາວັດ, ພ້ອມກະກຽມ ແລະ ດຳເນີນການກໍ່ສ້າງ ຈຳນວນຫລາຍໂຄງການ ກັບ ກຳລັງຕິດຕິດຕັ້ງ 8.000 ເມກາວັດ ຄາດວ່າຈະສຳເລັດພາຍ ໃນປີ 2020 ສະນັ້ນ ພວກເຮົາຈະມີ ເຂື່ອນໄຟຟ້າ ທັງໝົດ 90 ກວ່າແຫ່ງ ຢູ່ ໃນການຄຸ້ມຄອງ, ມີກຳລັງຕິດຕັ້ງ ທັງໝົດເກືອບ 14.000 ເມກາວັດ ໃນອະນາຄົດ ເຊິ່ງຈະສະໜອງໄຟຟ້າ ໃຫ້ແຂວງພາກເໜືອ, ພາກກາງ ແລະ ພາກໃຕ້ທົ່ວປະເທດຜ່ານລະ ບົບສາຍສົ່ງໄຟຟ້າທີ່ມີມາດຕະຖານ ສູງ.

**ເຂື່ອນນ້ຳຣຳ 2 ຈະເລີ່ມສ້າງປີໜ້າ: ເສດຖະກິດ- ສັງຄົມ**

ໂຄງການເຂື່ອນໄຟຟ້ານ້ຳຣຳ 2 ເມືອງບໍ່ແຕນ ແຂວງໄຊຍະບູລີ ເປັນໂຄງການເຂື່ອນຂະໜາດນ້ອຍພາຍຫຼັງລົງສຳຫຼວດເກັບກຳຂໍ້ມູນຜົນກະທົບທາງດ້ານສິ່ງແວດລ້ອມ-ສັງຄົມ ແມ່ນບໍ່ຫຼາຍ: ມີພຽງແຕ່ 7 ຄອບຄົວ ມີເນື້ອທີ່ສວນ ແລະ ໆ ທັງໝົດ 32.2 ພັນຕາແມັດ, ມີ 2 ບ້ານຄື: ບ້ານກຸ່ມ ມີ 1 ຄອບຄົວ ເນື້ອທີ່ນາ 2.6 ພັນຕາແມັດ. ສ່ວນບ້ານເມືອງຣຳມີ 6 ຄອບຄົວ ມີເນື້ອທີ່ຖືກໂຄງການ 7.5 ພັນຕາແມັດ, ດິນສວນ 3.4 ພັດຕາແມັດ. ຈາກຜົນເສຍຫາຍດັ່ງກ່າວ ທາງເຈົ້າຂອງໂຄງການ ແມ່ນໄດ້ຄິດໄລ່ ແລະ ຈ່າຍຄ່າຊົດເຊີຍໃຫ້. ສ່ວນຜົນກະທົບທາງສິ່ງແວດລ້ອມ ແລະ ທຳມະຊາດແມ່ນບໍ່ມີຍ້ອນວ່າແຫຼ່ງນ້ຳ ແລະ ປ່າໄມ້ສ່ວນຫຼາຍເປັນປ່າໂຄກມີແຕ່ເປັຍດິນແດງ ອີກດ້ານໜຶ່ງການຊົມໃຊ້ນ້ຳ ແລະ ການໄຫຼຂອງນ້ຳຕາດຣຳ ແມ່ນໃຊ້ໄດ້ປົກກະຕິ ບໍ່ວ່າລະດູຝົນກໍ່ຄືລະດູແລ້ງ ຫຼືວ່າ ເວລາກໍ່ສ້າງເຂື່ອນກໍ່ມີແຜນຮອງຮັບເພື່ອໃຫ້ປະຊາຊົນໄດ້ຊົມໃຊ້ນ້ຳສະອາດ, ບໍ່ມີສານປົນເປື້ອນໃນຍາມລົງມືກໍ່ສ້າງ.

**ຄຳສັ່ງເລກທີ 15 ຂອງນາຍົກ ມີຜົນສັກສິດສ່ຳໃດ ຫາກຍັງພົບເຫັນຂົນໄມ້ທ່ອນຢູ່?: ເລົ່າເລື່ອງເມືອງລາວ**

ຕອນແລງຂອງວັນທີ 21 ພະຈິກ 2017 ເວລາ 16:30 ໂມງ ໄດ້ມີຜູ້ເດີນທາງມາຈາກຊຽງຂວາງ ມຸ້ງໜ້າສູ່ແຂວງໄຊສົມບູນ ຫາ ແຂວງບໍລິຄຳໄຊ ໄດ້ພົບເຫັນມີເຫດການຂົນໄມ້ທ່ອນອອກຈາກປ່າແລ້ວຕິດຈັກລົດປະໄວ້ ທີ່ຈອດຢູ່ແຄມທາງໃຫຍ່ກຽມເຄື່ອນ ທີ່ ໃນບໍລິເວນເຂດບ້ານປູ້ ເມືອງທ່າໂທມ ແຂວງໄຊສົມບູນ.

ສິ່ງດັ່ງກ່າວໄດ້ສ້າງຄວາມກັງວົນໃຈຕໍ່ຜູ້ພົບເຫັນ ແລ້ວເກີດມີຄຳຖາມວ່າ: ຄຳສັ່ງເລກທີ 15 ຂອງທ່ານນາຍົກລັດຖະມົນຕີລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີເຂັ້ມງວດໃນການຄຸ້ມຄອງ ແລະ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ດັ່ງທີ່ກ່າວມານັ້ນ ມີຜົນສັກສິດສ່ຳໃດ? ຖ້າຫາກວ່າເຈົ້າໜ້າທີ່ແຂວງ, ເມືອງ ທີ່ປະຈຳແຕ່ລະຈຸດ

ກວດກາບໍ່ເຂັ້ມງວດຕໍ່ການປະຕິບັດໜ້າທີ່ຂອງຕົນ ຈຶ່ງເກີດມີຫາງສຽງຈົ່ມວ່າຂອງປະຊາຊົນເລື້ອຍໆ ໂດຍສະເພາະຜູ້ທຽວທາງຕາມເສັ້ນທາງດັ່ງກ່າວ.

ລັດຖະບານ ໄຟຂຽວໃຫ້ບໍລິສັດກາວຊູ ກວາງຈີ ສຳປະທານທີ່ດິນປູກຢາງພາລາຢູ່ແຂວງສາລະວັນ: ເສດຖະກິດ-ການຄ້າ

ກະຊວງແຜນການ ແລະ ການລົງທຶນ (ຜທ) ໄດ້ຈັດພິທີເຊັນສັນຍາສຳປະທານ ໂຄງການປູກຢາງພາລາ ແລະ ສ້າງຕັ້ງໂຮງງານປຸງແຕ່ງ ຢູ່ເຂດເມືອງສະໜ້ອຍ, ແຂວງ ສາລະວັນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ກັບ ບໍລິສັດ ກາວຊູ ກວາງຈີ ຈຳກັດ.

ໂຄງການນີ້ ເປັນໂຄງການທີ່ມີມູນຄ່າໃນເບື້ອງຕົ້ນ 6.5 ລ້ານໂດລາສະຫະລັດ ໂດຍມີໄລຍະສຳປະທານ 30 ປີ ໂດຍສ້າງຕັ້ງໂຮງງານໃຫ້ສຳເລັດພາຍໃນ 7 ປີ ນັບແຕ່ມື້ປູກຢາງພາລາ ສ່ວນລັດຖະບານຈະໄດ້ຜົນປະໂຫຍດຈາກໂຄງການໃນໄລຍະສຳປະທານຈາກຄ່າເຊົ່າດິນ ຈຳນວນ 450,000 ໂດລາສະຫະລັດ ແລະ ພາສີ-ອາກອນ ຈຳນວນ 4.2 ລ້ານກວ່າໂດລາສະຫະລັດ.

ກ່ອນໜ້ານັ້ນ ໃນວັນທີ 20 ທັນວາ 2011 ຜ່ານມາບໍລິສັດໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບລັດຖະບານ ເພື່ອສຳຫຼວດ ແລະ ສຶກສາຄວາມເປັນໄປໄດ້ໃນເນື້ອທີ່ 947 ເຮັກຕາ, ພາຍຫຼັງສຳຫຼວດ ສາມາດຄັດໄດ້ເນື້ອທີ່ຈຳນວນ 500 ເຮັກຕາ ທີ່ສາມາດປູກຢາງພາລາໄດ້.

ມີ 17 ບ້ານເກືອບ 2 ພັນຄອບຄົວ ຖືກໂຄງການກໍ່ສ້າງເຂື່ອນນ້ຳອູ 1 ດຽວນີ້ ກຽມຍົກຍ້າຍໄປໄລຍະ 2: ຂ່າວໂດຍ Laos Like

ອຳນາດການປົກຄອງແຂວງຫຼວງພະບາງ ເປີດເຜີຍວ່າປະຊາຊົນພາຍໃນແຂວງ 17 ບ້ານຈຳນວນ 1.9 ພັນຄອບຄົວ ຖືກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກນ້ຳອູ 1 ຊຶ່ງເວລານີ້ກຳລັງຫ້າງຫາກະກຽມແຜນການຍົກຍ້າຍໄລຍະ 2 ໂດຍກ່ອນໜ້ານີ້ໄດ້ສຳເລັດ ພ້ອມມີພິທີມອບຮັບບ້ານຈັດສັນໃໝ່ໃນ 2 ບ້ານທີ່ຖືກຍົກຍ້າຍໃນໄລຍະທຳອິດ ຊຶ່ງເຫັນວ່າຊີວິດການເປັນຢູ່ຂອງເຂົາເຈົ້າໄດ້ຮັບການພັດທະນາຂຶ້ນກວ່າເກົ່າແຕ່ກ່ອນຕັ້ງຫຼາຍເທົ່າ.

--------

Noudsavanh Pheungsavanh
LIWG Communication Officer
Tel: +856309815657
website: www.laolandinfo.org
FB: https://www.facebook.com/laolandinfo/